ເມືອງມິນນີແອໂພລິສ
(MINNEAPOLIS)

# ການປະເມີນຜົນ- ກະທົບດານ- ສຸຂະພາບຂອງແຜນ above the falls

ຮັບປະກັນຄວາມເທົ່າທຽມດ້ານ-
ສຸຂະພາບໃນການຕັດສິນໃຈ

City of Minneapolis
*Health Department*

## ກ່ຽວກັບຄະນະທີ່ປຶກສາພົນລະເມືອງ ABOVE THE FALLS, ທີມງານ ແລະບັນດາຄູ່ຮ່ວມງານຂອງໂຄງການປະເມີນຜົນກະທົບດ້ານສຸຂະພາບ

ໂດຍຕອບສະໜອງຕໍ່ກັບມະຕິຕົກລົງຂອງສະພາບໍລິຫານຕົວເມືອງ, ຄະນະທີ່ປຶກສາພົນລະເມືອງ ABOVE THE FALLS ໄດ້ຖືກສ້າງຕັ້ງຂຶ້ນເພື່ອເຮັດໜ້າທີ່ໃຫ້ຄໍາປຶກສາໃນໄລຍະຈັດຕັ້ງປະຕິບັດແຜນພັດທະນາ ABOVE THE FALLS, ໂດຍມີສະມາຊິກທີ່ໄດ້ຮັບແຕ່ງຕັ້ງທັງໝົດ 30 ທ່ານ ປະກອບມີບັນດາຕົວແທນຈາກ 10 ສະມາຄົມອ້ອມຂ້າງ, 10 ເຂດທ້ອງຖິ່ນ, 5 ຕົວແທນຈາກພາກທຸລະກິດ ແລະ 5 ຕົວແທນຈາກພາກອະນຸລັກສິ່ງແວດລ້ອມ. ຄະນະກໍາມະການຍ່ອຍໄດ້ປະຕິບັດໜ້າທີ່ເປັນຄະນະທີ່ປຶກສາໃຫ້ແກ່ການປະເມີນຜົນກະທົບດ້ານສຸຂະພາບ.

ທີມງານໂຄງການປະກອບມີພະນັກງານຈາກພະແນກວາງແຜນຊຸມຊົນ ແລະການພັດທະນາເສດຖະກິດ ແລະ ພະແນກສາທາລະນະສຸກ, ສະພາບໍລິຫານສວນສາທາລະນະ ແລະສະຖານທີ່ພັກຜ່ອນເມືອງມິນນີແອໂພລິສ (MINNEAPOLIS PARK AND RECREATION BOARD), ອົງການພັດທະນາເຂດແຄມແມ່ນໍ້າເມືອງມິນນີແອໂພລິສ (MINNEAPOLIS RIVERFRONT PARTNERSHIP), ແລະຄະນະກໍາມະການຍ່ອຍ. ພະແນກສາທາລະນະສຸກເມືອງມິນນີແອໂພລິສແມ່ນໜ່ວຍງານນໍາພາ. ນັກວາງແຜນຈາກພະແນກແຜນການຊຸມຊົນ ແລະການພັດທະນາເສດຖະກິດ ແລະ ສະພາບໍລິຫານສວນສາທາລະນະ ແລະສະຖານທີ່ພັກຜ່ອນເມືອງມິນນີແອໂພລິສເປັນຜູ້ໃຫ້ຄໍາແນະນໍາ, ຂໍ້ມູນ, ແຜ່ນທີ່ ແລະຮ່າງແຜນການຕ່າງໆ ໃນຕະຫຼອດຂະບວນການ ແລະນໍາພາ ແລະໃຫ້ການຊ່ວຍເຫຼືອໃນເລື່ອງຄວາມພະຍາຍາມໃຫ້ຊຸມຊົນມີສ່ວນຮ່ວມ. ບັນດາຄູ່ຮ່ວມງານຕົ້ນຕໍປະກອບມີ ສູນຊ່ວຍເຫຼືອຄົນລາວ, ໂບດແຄດໂທລິກ SAINTS CYRIL AND METHODIUS ແລະ ຫ້ອງອອກແບບເຂດຕົວເມືອງ URBAN DESIGN LAB.



# ຂໍ້ມູນພື້ນຖານ

*ເຂດພື້ນທີ່ນີ້ສາມາດເປັນບ່ອນທີ່ດີສຸດໃນເມືອງມິນນິແອໂພລິສ ຖ້າອຸດສາຫະກຳຖືກຍ້າຍໄປຢູ່ຈຸດທີ່ບໍ່ສຳຄັນຕໍ່ກັບສຸຂະພາບຂອງແມ່ນ້ຳ, ບາງຢ່າງທີ່ພວກເຮົາໃນຖານະເປັນພົນລະເມືອງຂອງເມືອງຄູ່ຝາແຝດ (Twin Cities) ຄວນຖືເປັນສິ່ງສັກສິດ. ~ຜູ້ຢູ່ອາໄສໃນຊຸມຊົນ*

*ຄຳຄິດເຫັນປະກອບ-ສ່ວນຂອງສາທາລະ-ນະປະກອບມີການສຳຫຼວດຄຳຄິດ-ເຫັນຊຸມຊົນທີ່ຖືກ-ເຮັດສຳເລັດ-ໂດຍຜູ້ຢູ່ອາໄສເກືອບ 400 ຄົນ, ການນຳສະເໜີໃຫ້ແກ່ 21 ຄະນະກຳມະ-ການທ້ອງຖິ່ນ, ກຸ່ມຊຸມຊົນ ແລະອົງການອ້ອມຂ້າງ, ການໂຄສະນານອກ-ສະຖານທີ່ຢູ່ 15 ງານຊຸມຊົນ, ລວມທັງສີ່ເວທີສາ-ທາລະນະທີ່ມີຜູ້ເຂົ້າ-ຮ່ວມຫຼາຍກວ່າ 300 ຄົນ ແລະມີບັດສະແດງຄຳ-ຄິດເຫັນຫຼາຍກວ່າ 120 ບັດ.*

ໃນປີ 2012 ແລະ 2013, ເມືອງມິນນິແອໂພລິສ ແລະ ສະພາບໍລິຫານສວນສາທາລະນະ ແລະສະຖານທີ່ພັກຜ່ອນເມືອງມິນນິແອໂພລິສ ໄດ້ປັບປຸງແກ້ໄຂແຜນພັດທະນາທີ່ໄດ້ນຳໃຊ້ມາແຕ່ປີ 2000 ທີ່ມີຊື່ວ່າ Above the Falls: ແຜນແມ່ບົດສຳລັບເຂດຕອນເທິງແມ່ນ້ຳໃນເມືອງມິນນິແອໂພລິສ. ພະແນກສາທາລະນະສຸກເມືອງມິນນິແອໂພລິສ ແລະບັນດາຄູ່ຮ່ວມງານໄດ້ດຳເນີນການປະເມີນຜົນກະທົບດ້ານສຸຂະພາບ ເພື່ອກວດເບິ່ງຜົນກະທົບດ້ານສຸຂະພາບທີ່ອາດຈະເກີດຂຶ້ນຈາກທາງເລືອກຕ່າງໆໃນການຕັດສິນໃຈກ່ຽວກັບການນຳໃຊ້ທີ່ດິນທີ່ສຳຄັນທີ່ກຳນົດໄວ້ໃນແຜນການ Above the Falls ສະບັບປັບປຸງ.

ໂດຍໄດ້ຮັບອະນຸມັດທຳອິດໃນປີ 2000, ແຜນພັດທະນາ Above the Falls ກຳນົດການປ່ຽນແປງທີ່ສຳຄັນຕໍ່ກັບເຂດແຄມແມ່ນ້ຳຕອນເທິງຂອງແມ່ນ້ຳມິສຊິສຊິບປີ (Mississippi) ໃນເມືອງມິນນິແອໂພລິສ. ບັນຫາດ້ານນະໂຍບາຍຕົ້ນຕໍແມ່ນການສະເໜີໃຫ້ຄ່ອຍໆຍ້າຍອຸດສາຫະກຳໜັກອອກຈາກເຂດແຄມແມ່ນ້ຳ ແລະແກ້ໄຂຂໍ້ຂັດແຍ້ງເລື່ອງການນຳໃຊ້ທີ່ດິນທີ່ໄດ້ເກີດຂຶ້ນເປັນເວລາດົນນານ. ນັບແຕ່ການນຳໃຊ້ແຜນດັ່ງກ່າວ, ບັນດາໂຄງການຂອງພາກລັດ ແລະພາກເອກະຊົນຈຳນວນຫຼວງຫຼາຍໄດ້ຖືກເຮັດສຳເລັດ.ບັນດາເຂດໂດຍສະເພາະພາກເໜືອເມືອງມິນນິແອໂພລິສທາງເບື້ອງຕາເວັນຕົກຂອງແມ່ນ້ຳສືບຕໍ່ເປັນເຂດທີ່ມີຄົນເປັນໂຣກຕຸ້ຍ, ຄວາມທຸກຍາກ, ອາຊະຍາກອນ ແລະການຫວ່າງງານໃນອັດຕາສູງຢ່າງບໍ່ສົມສ່ວນ. ການເຂົ້າເຖິງແມ່ນ້ຳຈາກທັງພາກເໜືອ ແລະພາກຕາເວັນອອກສ່ຽງເໜືອຂອງເມືອງມິນນິແອໂພລິສ ແມ່ນຈຳກັດ.

ສະພາບແວດລ້ອມທີ່ມະນຸດສ້າງຂຶ້ນມີຜົນກະທົບອັນເລິກເຊິ່ງຕໍ່ກັບວິຖີຊີວິດ ແລະການເປັນຢູ່ຂອງຜູ້ຢູ່ອາໄສ, ເຊິ່ງສິ່ງນີ້ຖືກຢືນຢັນໂດຍການສຶກສາວິໄຈໃນດ້ານສາທາລະນະສຸກ, ວິທະຍາສາດສັງຄົມ ແລະການວາງແຜນຕົວເມືອງ. ການປະເມີນຜົນກະທົບດ້ານສຸຂະພາບແມ່ນເຄື່ອງມືໜຶ່ງທີ່ຊຸມຊົນ ແລະຜູ້ເຮັດການຕັດສິນໃຈນຳໃຊ້ເພື່ອປະເມີນຜົນກະທົບດ້ານສຸຂະພາບທີ່ເປັນໄປໄດ້ຈາກໂຄງການ ຫຼືນະໂຍບາຍທີ່ສະເໜີມາ ກ່ອນທີ່ມັນຈະຖືກສ້າງ ຫຼືຈັດຕັ້ງປະຕິບັດ. ມັນລວມເອົາຄຳຄິດເຫັນຂອງສາທາລະນະ ແລະຂໍ້ມູນຕ່າງໆ ເພື່ອສ້າງເປັນຄຳສະເໜີແນະທີ່ເຮັດໃຫ້ຜົນປະໂຫຍດດ້ານສຸຂະພາບທີ່ດີມີຫຼາຍສຸດ, ຜົນຕາມມາທີ່ບໍ່ດີມີນ້ອຍສຸດ ແລະມຸ້ງຫວັງບັນລຸໄດ້ຄວາມເທົ່າທຽມດ້ານສຸຂະພາບທີ່ດີກວ່າ. ການປະເມີນຜົນກະທົບດ້ານສຸຂະພາບຖືກດຳເນີນແຕ່ເດືອນມັງກອນ 2012 ຫາເດືອນມິຖຸນາ 2013. ບັນດາກິດຈະກຳຂອງການປະເມີນຜົນກະທົບດ້ານສຸຂະພາບມີຄວາມສອດຄ່ອງກັນເປັນຢ່າງດີກັບຂະບວນການປັບປຸງແກ້ໄຂແຜນພັດທະນາຂອງທາງເມືອງ ແລະສະພາບໍລິຫານສວນສາທາລະນະ, ລວມທັງການເຂົ້າຮ່ວມຢູ່ບັນດາເວທີສາທາລະນະ ແລະ

ການເລີ່ມເປີດໄລຍະການປະເມີນຄືນຂອງສາທາລະນະສຳລັບສະພາບໍລິຫານສວນ ແລະສະຖານທີ່ພັກຜ່ອນເມືອງມິນນິແອໂພລິສ ແລະຂອງຕົວເມືອງມິນນິແອໂພລິສ.

ເພື່ອສືບສວນເບິ່ງຜົນກະທົບດ້ານສຸຂະພາບທີ່ເປັນໄປໄດ້ຂອງບັນດາການປ່ຽນແປງຕໍ່ກັບເຂດແຄມແມ່ນ້ຳທີ່ສະເໜີມາ, ທີມງານໂຄງການປະເມີນຜົນກະທົບດ້ານສຸຂະພາບໄດ້ກວດເບິ່ງເອກະສານດ້ານວິທະຍາສາດ, ຂໍ້ມູນທີ່ສັງລວມມາກ່ຽວກັບສະພາບສຸຂະພາບທີ່ມີຢູ່ໃນປະຈຸບັນ, ດຳເນີນການສຳຫຼວດຄຳຄິດເຫັນຂອງຊຸມຊົນ, ແລະຈັດເວທີສາທາລະນະ ແລະການນຳສະເໜີການປະເມີນຜົນກະທົບດ້ານສຸຂະພາບ. ສິ່ງຄົ້ນພົບທີ່ສອດຄ່ອງຈາກວິທີການເກັບກຳຂໍ້ມູນທີ່ຫຼາກຫຼາຍແມ່ນພື້ນຖານສຳລັບການສ້າງຄຳສະເໜີແນະທີ່ໃນທ້າຍທີ່ສຸດຈະຖືກເອົາລວມເຂົ້າໃນແຜນການພັດທະນາສະບັບປັບປຸງ.

# ສັງລວມສິ່ງຄົ້ນພົບ

### ການຕັດສິນໃຈດ້ານການນຳໃຊ້ທີ່ດິນ

ທີມງານໂຄງການປະເມີນຜົນກະທົບດ້ານສຸຂະພາບໄດ້ເລືອກເອົາສີ່ທາງເລືອກກ່ຽວກັບການຕັດສິນໃຈດ້ານການນຳໃຊ້ທີ່ດິນທີ່ວັດແທກໄດ້ທີ່ສະເໜີມາໃນແຜນພັດທະນາ Above the Falls ເພື່ອເນັ້ນໜັກຂອບເຂດຂອງການປະເມີນຜົນກະທົບດ້ານສຸຂະພາບ. ພວກມັນແມ່ນ:







ເພີ່ມເນື້ອທີ່ບໍລິເວນສວນສາທາລະນະ 108 ເອເຄີ

•

ຂະຫຍາຍທາງຂີ່ລົດຖີບ ແລະທາງຍ່າງແຄມແມ່ນ້ຳທີ່ມີຢູ່ ເພີ່ມອີກ 4.2 ໄມລ

•

ເພີ່ມວຽກເຮັດງານທຳ 3,000 ຕຳແໜ່ງໃນໄລຍະຍາວ

•

ເພີ່ມເຮືອນຢູ່ອາໄສໃໝ່ອີກ 1,000 ຫຼັງໃນໄລຍະຍາວ

ບັນດາກິດຈະກຳການປະເມີນຜົນກະທົບດ້ານສຸຂະພາບເຮັດການປະເມີນຜົນກະທົບດ້ານສຸຂະພາບຂອງແຕ່ລະທາງເລືອກໃນການຕັດສິນໃຈດ້ານການນຳໃຊ້ທີ່ດິນສີ່ທາງເລືອກດັ່ງກ່າວຕໍ່ກັບ 10 ເຂດທີ່ຢູ່ອ້ອມຂ້າງເຂດພື້ນທີ່ພັດທະນາ Above the Falls.

### ຜົນກະທົບທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບໂຣກຕຸ້ຍ ແລະສຸຂະພາບຈິດ

ອີງຕາມຜົນການສຳຫຼວດຄຳຄິດເຫັນຂອງຊຸມຊົນ, ເຂດແຄມແມ່ນ້ຳແມ່ນມີຄວາມສຳຄັນທີ່ສຸດສຳລັບຜູ້ຢູ່ອາໄສຂອງເຂດພາກເໜືອ ແລະຕາເວັນອອກສ່ຽງເໜືອຂອງເມືອງມິນນີແອໂພລິສ ໃນຖານະເປັນບ່ອນອອກກຳລັງກາຍ ແລະພັກຜ່ອນ. ຜູ້ຕອບການສຳຫຼວດ ແລະຜູ້ເຂົ້າຮ່ວມຫຼາຍໆຄົນໃນເວທີເສວະນາຊຸມຊົນ ເຊື່ອວ່າການເພີ່ມບໍລິເວນສວນສາທາລະນະໃໝ່ຈະມີຜົນກະທົບທາງບວກຕໍ່ກັບສຸຂະພາບຂອງເຂົາເຈົ້າ. ໃນຄວາມເປັນຈິງ, ສວນສາທາລະນະແມ່ນໜຶ່ງໃນການປ່ຽນແປງທີ່ມັກທີ່ສຸດຕໍ່ກັບເຂດແຄມແມ່ນ້ຳມິສຊິສຊິບປີຕອນເທິງ ໂດຍທີ່ຫຼາຍກວ່າ 50 ເປີເຊັນຂອງຜູ້ຕອບການສຳຫຼວດບອກວ່າເນື້ອທີ່ສວນທີ່ເພີ່ມຂຶ້ນຈະເຮັດໃຫ້ສະພາບຂອງເຂົາເຈົ້າດີຂຶ້ນ.

ຜົນກະທົບດ້ານສຸຂະພາບໃນທາງບວກທີ່ເປັນໄປໄດ້ກ່ຽວກັບການຫຼຸດຜ່ອນໂຣກຕຸ້ຍ ແລະການປັບປຸງໃນດ້ານສຸຂະພາບຈິດເນື່ອງຈາກການເພີ່ມເນື້ອທີ່ສວນສາທາລະນະ ຈະຖືກຍົກສູງໂດຍການເຊື່ອມໂຍງຢ່າງເຂັ້ມແຂງລະຫວ່າງເນື້ອທີ່ສວນ, ກິດຈະກຳອອກກຳລັງກາຍ ແລະສຸຂະພາບຈິດໃນເອກະສານດ້ານສາທາລະນະສຸກ ແລະຫຼັກຖານທີ່ສະແດງໃຫ້ເຫັນຢ່າງຈະແຈ້ງວ່າຜູ້ຢູ່ອາໄສກຳລັງໃຊ້ເຂດແຄມແມ່ນ້ຳເປັນບ່ອນອອກກຳລັງກາຍ, ລວມທັງສ່ວນໃຫຍ່ຂອງຜູ້ຕອບການສຳຫຼວດ.

*ແມ່ນ້ຳມິສຊິສຊິບປີແມ່ນຄວາມພາກພູມ-ໃຈຂອງປະເທດ, ແມ່ນພື້ນຖານສຳລັບປະເພນີພື້ນເມືອງ, ແມ່ນສິ່ງເຕືອນໃຈເຖິງພະ-ລັງຂອງນ້ຳ ແລະທຳມະຊາດໃນ-ທ່າມກາງການຂະຫຍາຍຕົວຂອງເມືອງ.*

ຜູ້ຢູ່ອາໄສໃນຊຸມຊົນ

### ຜົນກະທົບທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບຄຸນນະພາບດ້ານສິ່ງແວດລ້ອມ

"ມົນລະພິດທາງອາກາດ," "ສຽງດັງ ແລະການຈາລະຈອນໜາແໜ້ນ," ແລະ "ລົດຕິດ" ໃນລຳດັບນັ້ນ ແມ່ນຖືກພົບວ່າເປັນປັດໃຈດ້ານສິ່ງແວດລ້ອມທີ່ສຳຄັນທີ່ສິ່ງຜົນກະທົບດ້ານລົບຕໍ່ກັບສຸຂະພາບຂອງຜູ້ຢູ່ອາໄສຂອງເຂດພາກເໜືອ ແລະຕາເວັນອອກສ່ຽງເໜືອກຂອງເມືອງມິນນີແອໂພລິສ. ຜູ້ຕອບການສຳຫຼວດຄຳຄິດເຫັນຂອງຊຸມຊົນ ແລະຜູ້ເຂົ້າຮ່ວມໃນເວທີເສວະນາຂອງຊຸມຊົນຫຼາຍໆຄົນ ຫວັງວ່າບັນດາອຸດສາຫະກຳໜັກທີ່ຕັ້ງຢູ່ຕາມແຄມແມ່ນ້ຳມິສຊິສຊິບປີຕອນເທິງຈະຍ້າຍອອກໄປ, ເຖິງແມ່ນວ່າ ນີ້ບໍ່ແມ່ນສ່ວນໜຶ່ງຂອງການຈັດຕັ້ງປະຕິບັດໄລຍະສັ້ນຂອງແຜນພັດທະນາ Above the Falls ສະບັບປັບປຸງ ເນື່ອງຈາກເຫດຜົນດ້ານຄວາມເປັນໄປໄດ້. ພວກເຂົາເຫັນວ່າອຸດສາຫະກຳເຫຼົ່ານີ້ແມ່ນແຫຼ່ງທີ່ມາຂອງມົນລະພິດທາງອາກາດ, ສຽງ ແລະທາງນ້ຳ ເຊິ່ງສິ່ງຜົນກະທົບທີ່ບໍ່ດີຕໍ່ກັບສຸຂະພາບຂອງເຂົາເຈົ້າ.



ການອອກແບບທາງແຄບໆລຽບຕາມບໍລິເວນສວນທີ່ສະເໜີມາ ແລະການຟື້ນຟູເຂດດິນບໍລິເວນນ້ຳລຽບຕາມເຂດແຄມແມ່ນ້ຳ ຈະບໍ່ລວມມີຕົ້ນໄມ້ທີ່ໜາແໜ້ນພຽງພໍທີ່ຈະເຮັດໃຫ້ເກີດການຫຼຸດລົງທີ່ເຫັນໄດ້ໃນດ້ານມົນລະພິດທາງອາກາດ ແລະສຽງດັງ, ເຖິງແມ່ນວ່າການປ່ຽນແປງເຫຼົ່ານີ້ອາດຈະໃຫ້ຄວາມໂລ່ງໃຈທາງຈິດຕະວິທະຍາຈຳນວນໜຶ່ງກໍ່ຕາມ. ຂໍ້ເທັດຈິງທີ່ວ່າແຫຼ່ງມົນລະພິດທາງອາກາດທີ່ເກີດຈາກອຸດສາຫະກຳ ແລະເສັ້ນທາງຫຼວງແມ່ນເປັນໄປໄດ້ວ່າຈະຍັງຄົງຢູ່ໃນເຂດພື້ນທີ່ Above the Falls ຊີ້ໃຫ້ເຫັນວ່າການເພີ່ມເນື້ອທີ່ສວນອາດຈະມີຜົນກະທົບນ້ອຍດຽວເຖິງບໍ່ມີຜົນກະທົບເລີຍຕໍ່ກັບມົນລະພິດທາງອາກາດ ແລະ ສະນັ້ນ ຈຶ່ງມີຜົນກະທົບໜ້ອຍຫຼາຍຕໍ່ກັບອັດຕາການເກີດໂຣກຫືດ. ຫຼັກຖານໃນເອກະສານທາງວິທະຍາສາດຊີ້ໃຫ້ເຫັນວ່າເນື້ອທີ່ສວນໃໝ່ມີຄວາມເປັນໄປໄດ້ວ່າຈະມີຜົນກະທົບດ້ານບວກຕໍ່ກັບການຫຼຸດຜ່ອນມົນລະພິດທາງນ້ຳໃນແມ່ນ້ຳ ໂດຍການໃຫ້ເຂດກັນຊົນລະຫວ່າງເຂດອຸດສາຫະກຳໜັກ, ເຂດພື້ນທີ່ປູຢາງ ແລະແມ່ນ້ຳ.

*ທີ່ດິນດ້ານທິດເໜືອຈຳເປັນຕ້ອງໄດ້ຮັບການພັດທະນາເພື່ອສະໜອງຖານພາສີທີ່ໃຫຍ່ກວ່າ ແລະວຽກເຮັດງານທຳທີ່ຫຼາຍຂຶ້ນສຳລັບເຂດອ້ອມຂ້າງ. ພວກເຮົາຕ້ອງການວຽກເຮັດທີ່ໃຊ້ພະລັງງານສະອາດ ແລະວຽກເຮັດທີ່ວ່າຈ້າງຄົນຈາກເມືອງມິນນີແອໂພລິສຢ່າງແທ້ຈິງ ແລະວ່າຈ້າງແມ່ຍິງຫຼາຍຂຶ້ນ.*

ຜູ້ຢູ່ອາໄສໃນຊຸມຊົນ

### ຜົນກະທົບທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບຄວາມສາມັກຄີ ແລະຄວາມປອດໄພຂອງເຂດບໍລິເວນໃກ້ຄຽງ

ການຂະຫຍາຍທາງຂີ່ລົດຖີບ ແລະທາງຍ່າງ ແລະການປັບປຸງການເສັ້ນທາງຂົນສົ່ງທີ່ສຳຄັນໄດ້ຖືກສະແດງໃຫ້ເຫັນວ່າຊ່ວຍປັບປຸງການຮັບຮູ້ກ່ຽວກັບຄວາມສາມາດຍ່າງໄດ້; ສົ່ງເສີມການພົວພັນສື່ສານຂອງເຂດອ້ອມຂ້າງ; ແລະສົ່ງເສີມຄວາມສຶກເປັນຊຸມຊົນ, ຄວາມປອດໄພ ແລະຄວາມໝັ້ນຄົງ. ອີງຕາມຜົນການສຳຫຼວດ Hennepin County 2010 SHAPE, ການຮັບຮູ້ກ່ຽວກັບຄວາມສາມາດຍ່າງໄດ້ ແລະຄວາມຮູ້ສຶກເປັນຊຸມຊົນ ແມ່ນມີຕ່ຳກວ່າໃນໝູ່ຜູ້ຢູ່ອາໄສໃນເຂດພາກເໜືອຂອງເມືອງມິນນີແອໂພລິສ ທຽບກັບຜູ້ຢູ່ອາໄສໃນເຂດອື່ນຂອງເມືອງ. ອາຊະຍາກອນ ແລະການສັນຈອນຂອງລົດບັນທຸກທີ່ມຸ້ງໜ້າໄປຫາເຂດອຸດສາຫະກຳທ້ອງຖິ່ນ ເປັນຂົ່ມຂູ່ຕໍ່ກັບຄວາມປອດໄພຂອງທັງຄົນຍ່າງ ແລະຄົນຂີ່ລົດຖີບໃນເຂດ Above the Falls ແລະ ເຂດພື້ນທີ່ໃກ້ຄຽງ.

ປະມານສອງສ່ວນສາມຂອງຜູ້ຕອບການສະຫຼວດຂອງມູນນິທິສວນສາທາລະນະເມືອງມິນນີແອໂພລິສ (Minneapolis Parks Foundation Survey) ບອກວ່າເຄີຍໃຊ້ທາງຍ່າງ ແລະທາງຂີ່ລົດຖີບໃນທ້ອງຖິ່ນ. ໃນບັນດາສິ່ງດຶງດູດທັງໝົດທີ່ເປັນໄປໄດ້ທີ່ຈະດຶງດູດເອົາຜູ້ຕອບການສະຫຼວດຄຳຄິດເຫັນຂອງຊຸມຊົນໄປຍັງເຂດແຄມແມ່ນ້ຳ, "ທາງຍ່າງທີ່ບໍ່ສິ້ນສຸດລຽບຕາມທັງສອງຝາກແຄມແມ່ນ້ຳ" ໄດ້ຖືກເລືອກເອົາຫຼາຍກວ່າສິ່ງດຶງດູດອື່ນທີ່ເປັນໄປໄດ້. ການເພີ່ມເສັ້ນທາງຍ່າງແຄມແມ່ນ້ຳ ເຊັ່ນດຽວກັບການເພີ່ມເຂດສວນສາທາລະນະ ຈະຮັບໃຊ້ຜູ້ຢູ່ອາໄສຈາກທັງສອງຝັ່ງຂອງແມ່ນ້ຳ ແລະເຂດອື່ນ ແລະ ເປັນໄປໄດ້ທີ່ຈະສົ່ງສຸຂະພາບຮ່າງກາຍ ແລະສຸຂະພາບຈິດທີ່ດີ. ການໃຊ້ເສັ້ນທາງຍ່າງເຫຼົ່ານີ້ທີ່ເພີ່ມຂຶ້ນຈະຊ່ວຍປັບປຸງຄວາມສາມັກຄີ ແລະຄວາມປອດໄພຂອງຊຸມຊົນຫຼືບໍ່ນັ້ນແມ່ນບໍ່ຈະແຈ້ງເທື່ອ ແລະຍັງຂຶ້ນກັບປັດໃຈອ້ອມຂ້າງອື່ນເຊັ່ນວ່າການປັບປຸງຖະໜົນລຽບແຄມແມ່ນ້ຳ, ເສັ້ນທາງເຊື່ອມຕໍ່ສຳຄັນຫາແມ່ນ້ຳ.

ເຂດພາກເໜືອເມືອງມິນນີແອໂພລິສ ມີຈຸດເດັ່ນໂດຍບັນຫາປັດໃຈຕ່າງໆທີ່ສົ່ງຜົນກະທົບຕໍ່ກັບຄວາມສາມັກຄີ ແລະຄວາມປອດໄພເຂດໃກ້ຄຽງທີ່ບໍ່ກ່ຽວຂ້ອງກັບທາງຍ່າງ ຫຼືການປັບປຸງຖະໜົນລຽບແຄມແມ່ນ້ຳ ເຊັ່ນວ່າການຮັບຮູ້ທີ່ຕ່ຳກ່ຽວກັບຄວາມສາມາດຍ່າງໄດ້, ການສັນຈອນຂອງລົດບັນທຸກໜັກ, ທີ່ຢູ່ອາໄສທີ່ມີຄຸນນະພາບຕ່ຳ, ຄວາມທຸກຍາກທີ່ມີຄວາມໜາແໜ້ນສູງ, ແລະອາຊະຍາກອນທີ່ຂ້ອນຂ້າງສູງກວ່າ. ເພາະວ່າເງື່ອນໄຂການດຳລົງຊີວິດໃນເຂດພາກຕາເວັນອອກສຽງເໜືອແມ່ນແຕກຕ່າງຢ່າງຊັດເຈນຈາກເຂດພາກເໜືອ, ການເພີ່ມທາງຍ່າງໃໝ່ ແລະການປັບປຸງເສັ້ນທາງອາດຈະມີຜົນກະທົບຫຼາຍກວ່າຕໍ່ກັບຄວາມຮູ້ສຶກຂອງຊຸມຊົນ ແລະຄວາມປອດໄພຕໍ່ກັບຜູ້ຢູ່ອາໄສໃນເຂດ ພາກຕາເວັນອອກສຽງເໜືອ ຫຼາຍກວ່າຜູ້ຢູ່ອາໄສທາງພາກເໜືອ.

## ຜົນກະທົບທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບການຈ້າງງານ

ບົດຄວາມທາງວິທະຍາສາດພົບເຫັນການເຊື່ອມໂຍງທີ່ເຂັ້ມແຂງລະຫວ່າງການປັບປຸງໃນດ້ານສາທາລະນະສຸກກັບການເພີ່ມຂຶ້ນໃນການນຳໃຊ້ທີ່ດິນເພື່ອສ້າງລາຍຮັບ. ແນວໃດກໍ່ຕາມ, ຜູ້ຢູ່ອາໄສທາງພາກເໜືອ ແລະພາກ ຕາເວັນອອກສ່ຽງເໜືອຂອງເມືອງມິນນີແອໂພລິສ ສະແດງຄວາມສົງໄສວ່າວຽກເຮັດງານທຳທີ່ສະເໜີມານັ້ນ ຈະມີຜົນກະທົບດ້ານສຸຂະພາບໃນທາງບວກຕໍ່ກັບເຂດພື້ນທີ່ທີ່ມີອັດຕາເກີດບັນຫາສຸຂະພາບທີ່ສູງກວ່າ. ການທີ່ທາງເມືອງຈະສາມາດດຶງດູດວຽກເຮັດງານທຳໃໝ່ 3000 ຕຳແໜ່ງມາສູ່ເຂດ Above the Falls ໄດ້ສຳເລັດຫຼືບໍ່ ແລະໃຜຈະໄດ້ປະໂຫຍດນັ້ນ ແມ່ນເລື່ອງທີ່ຍັງບໍ່ແນ່ນອນ. ແນວໃດກໍ່ຕາມ, ຈຸດສຸມທີ່ເນັ້ນໜັກໃສ່ການໃຊ້ທີ່ດິນເພື່ອສ້າງວຽກເຮັດງານທຳຂອງແຜນ Above the Falls ສະບັບປັບປຸງ ສາມາດມີໜຶ່ງໃນບັນດາຜົນກະທົບທີ່ຮຸນແຮງທີ່ສຸດໃນດ້ານສາທາລະນະສຸກ, ໂດຍສະເພາະ ອັດຕາການຕາຍກ່ອນກຳນົດ, ບັນຫາສຸຂະພາບຈິດ ແລະພະຍາດຊຳເຮື້ອ. ຜົນກະທົບຕໍ່ກັບສຸຂະພາບນີ້ສາມາດເຮັດໃຫ້ມີຫຼາຍສຸດ ໂດຍນະໂຍບາຍການຈ້າງງານໃນທ້ອງຖິ່ນ ເຊິ່ງເນັ້ນໜັກໃສ່ການຈ້າງງານຜູ້ຢູ່ອາໄສທີ່ໃນປະຈຸບັນປະສົບກັບຄວາມບໍ່ສະເໝີພາບດ້ານສຸຂະພາບ ແລະການຈ້າງງານ.





## ຜົນກະທົບທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບທີ່ຢູ່ອາໄສ

ການເຊື່ອມໂຍງທີ່ເຂັ້ມແຂງທີ່ສຸດໃນບົດຄວາມທາງວິທະຍາສາດລະຫວ່າງການປັບປຸງໃນດ້ານສຸຂະພາບ ແລະທີ່ຢູ່ອາໄສ ແມ່ນກ່ຽວຂ້ອງກັບການມີຢູ່ຂອງທີ່ຢູ່ອາໄສທີ່ສາມາດຊື້ໄດ້. ແນວໃດກໍ່ຕາມ, ໂດຍຄຳນຶງເຖິງຄວາມໜາແໜ້ນທີ່ສູງຢູ່ແລ້ວຂອງທີ່ຢູ່ອາໄສທີ່ສາມາດຊື້ໄດ້ ແລະຄວາມທຸກຍາກໃນເຂດພາກເໜືອຂອງມິນນີແອໂພລິສ, ທີ່ຢູ່ອາໄສທີ່ສາມາດຊື້ໄດ້ແມ່ນເປັນໄປບໍ່ໄດ້ທີ່ຈະເປັນຈຸດສຸມຂອງແຜນ Above the Falls. ຜົນກະທົບດ້ານສຸຂະພາບໂດຍລວມຂອງທີ່ຢູ່ອາໄສໃໝ່ທີ່ສາມາດຊື້ໄດ້ ອາດຈະມີນ້ອຍ ຫຼືເປັນໄປໄດ້ວ່າບໍ່ດີ ຖ້າທີ່ຢູ່ອາໄສທີ່ສາມາດຊື້ໄດ້ເຮັດໃຫ້ຄວາມໜາແໜ້ນຂອງຄວາມທຸກຍາກໃນເຂດ Above the Falls ແລະເຂດພື້ນທີ່ໃກ້ຄຽງ ເພີ່ມຂຶ້ນ. ຜົນກະທົບດ້ານສຸຂະພາບຕົ້ນຕໍຂອງທີ່ຢູ່ອາໄສທີ່ເພີ່ມຂຶ້ນເປັນໄປໄດ້ວ່າຈະແມ່ນຄວາມເປັນຢູ່ທີ່ດີຂຶ້ນຂອງຄົນຈຳນວນນ້ອຍທີ່ຢູ່ລຽບຕາມເຂດແຄມແມ່ນ້ຳ. ອີງຕາມການແນະນຳຂອງບົດຄວາມທາງວິທະຍາສາດ ແລະການສຳຫຼວດຄວາມຄິດເຫັນຂອງຊຸມຊົນ, ສິ່ງທີ່ສາມາດເຮັດໃຫ້ຜົນກະທົບທາງບວກດ້ານສຸຂະພາບມີຫຼາຍສຸດ ແມ່ນການປັບປຸງທີ່ຢູ່ອາໄສທີ່ມີຢູ່ແລ້ວໃນເຂດບໍລິເວນໃກ້ຄຽງ ແລະລຽບຕາມຖະໜົນແຄມແມ່ນ້ຳເຊິ່ງເປັນເຂດທີ່ທີ່ຢູ່ອາໄສທີ່ຊຸດໂຊມ. ບໍລິເວນອ້ອມຂ້າງທີ່ມີການບຳລຸງຮັກສາທີ່ດີອາດຈະສົ່ງເສີມຄວາມປອດໄພ, ຄວາມຮູ້ສຶກ ແລະການເປັນຢູ່ທີ່ດີຂອງຊຸມຊົນ.

## ສິ່ງຄົ້ນພົບຂອງການປະເມີນຜົນກະທົບດ້ານສຸຂະພາບນີ້ ຊີ້ບອກວ່າທາງເມືອງສາມາດ:

- ເຮັດວຽກຮ່ວມກັບບັນດາຫົວໜ່ວຍທຸລະກິດ ແລະອຸດສາຫະກຳທີ່ມີຢູ່ໃນປະຈຸບັນເຊິ່ງເປັນໄປໄດ້ວ່າຈະສືບຕໍ່ຕັ້ງຢູ່ໃນເຂດພື້ນທີ່ Above the Falls. ຊອກຫາວິທີທີ່ໃຫ້ພວກເຂົາເຂົ້າມາມີສ່ວນຮ່ວມຢ່າງມີປະສິດທິຜົນເພື່ອຊ່ວຍໃນການບັນລຸໄດ້ຈຸດປະສົງຂອງແຜນ Above the Falls, ຕົວຢ່າງວ່າ ໂດຍການສົ່ງເສີມວິທີການປະຕິບັດງານທີ່ເປັນມິດກັບສິ່ງແວດລ້ອມ ແລະມີສີຂຽວຫຼາຍຂຶ້ນ, ໂດຍການຊ່ວຍຮັບປະກັນໃຫ້ມີການເຊື່ອມຕໍ່ທີ່ປອດໄພຈາກເຂດໃກ້ຄຽງຫາແມ່ນ້ຳ ແລະ ໂດຍການເຮັດວຽກເພື່ອບັນລຸໄດ້ຈຳນວນວຽກງານທຳທີ່ຫຼາຍຂຶ້ນໃນເຂດພື້ນທີ່.
- ຄົ້ນຫາວິທີການເພື່ອຈັດຕັ້ງປະຕິບັດການຈ້າງງານໃນທ້ອງຖິ່ນໃນບັນດາຫົວໜ່ວຍທຸລະກິດ ແລະອຸດສາຫະກຳໃນເຂດພື້ນທີ່ Above the Falls ແລະເພີ່ມໂຄງການຝຶກອົບຮົມເພື່ອຊ່ວຍເຫຼືອຜູ້ຢູ່ອາໄສທີ່ຊອກວຽກເຮັດໃນເຂດພື້ນທີ່ນີ້. ສຸມໃສ່ຄວາມເທົ່າທຽມກັນດ້ານວຽກເຮັດງານທຳ ແລະໂອກາດສຳລັບເຊື້ອຊາດ ແລະຊົນເຜົ່າສ່ວນນ້ອຍ ແລະປະຊາກອນທີ່ຍ້າຍຖິ່ນເຂົ້າມາ.
- ຕິດຕາມລະດັບຄຸນນະພາບອາກາດ ແລະສຽງໃນເຂດ Above the Falls ຢ່າງມີປະສິດທິຜົນ ແລະເຮັດວຽກຮ່ວມກັບອຸດສາຫະກຳຕ່າງໆ ເພື່ອກຳນົດວິທີທາງໃນການຫຼຸດຜ່ອນລະດັບທີ່ສາມາດເປັນອັນຕະລາຍຕໍ່ກັບສຸຂະພາບ. ເຮັດວຽກຮ່ວມກັບເຈົ້າຂອງເຮືອນ ແລະເຈົ້າຂອງດິນເພື່ອປັບປຸງເຂດທີ່ຢູ່ອາໄສ ແລະບ່ອນຢູ່ອາໄສທີ່ມີຢູ່ໃນປະຈຸບັນໃນເຂດໃກ້ຄຽງລຽບຕາມຖະໜົນແຄມແມ່ນ້ຳ ເພື່ອຫຼຸດຜ່ອນອາຊະຍາກອນ ແລະບັນຫາຄວາມປອດໄພ ແລະສົ່ງເສີມສຸຂະພາບຜ່ານບໍລິເວນໃກ້ຄຽງທີ່ມີການບຳລຸງຮັກສາເປັນຢ່າງດີ.
- ຊອກຫາທາງເລືອກທີ່ປອດໄພສຳລັບທຸກຄົນໃນການເຂົ້າເຖິງເຂດແຄມແມ່ນ້ຳ ເຊັ່ນວ່າການວາງແຜນສຳລັບການສັນຈອນທີ່ບໍ່ຢູ່ເທິງຖະໜົນທີ່ຮອງຮັບຜູ້ຄົນທີ່ພິການດ້ານການເຄື່ອນໄຫວ, ການຂີ່ລົດຖີບ ແລະການຍ່າງ. ຮັບປະກັນການຂົນສົ່ງສາທາລະນະໂດຍກົງຫາເຂດແຄມແມ່ນ້ຳ ແລະບ່ອນຈອດລົດທີ່ພຽງພໍ ແລະເຂົ້າເຖິງໄດ້ຕາມລຽບເຂດແຄມແມ່ນ້ຳ.
- ສະໜັບສະໜູນຄວາມພະຍາຍາມສົ່ງເສີມໄວໜຸ່ມ, ຊຸມຊົນຜິວສີ ແລະຜູ້ທີ່ມີຄວາມສາມາດດ້ານພາສາອັງກິດຈຳກັດໃຫ້ມີສ່ວນຮ່ວມຫຼາຍຂຶ້ນໃນກິດຈະກຳຕ່າງໆ ເພື່ອອອກແບບ, ພັດທະນາ, ຮັກສາໄວ້ ແລະມີຄວາມສຸກກັບເຂດແຄມແມ່ນ້ຳມີສຊີສຊິບປີຕອນເທິງ.

*ພວກເຮົາຍ້າຍໄປຢູ່ພາກເໜືອຂອງມິນນີແອໂພລິສ ເນື່ອງຈາກແຜນ ແລະວິໄສທັດ Above the Falls. ພວກເຮົາຕ້ອງການໃຫ້ລູກຫຼານຂອງພວກເຮົາເຫັນມັນສຳເລັດຜົນ.*

ຜູ້ຢູ່ອາໄສໃນຊຸມຊົນ

ການປ່ຽນແປງຕໍ່ກັບສະພາບແວດລ້ອມທີ່ສ້າງຂຶ້ນທີ່ສະເໜີມາໃນແຜນແມ່ບົດ ABOVE THE FALLS ສາມາດມີຜົນກະທົບທາງບວກທີ່ໃຫຍ່ຫຼວງຕໍ່ກັບສຸຂະພາບຂອງຜູ້ຢູ່ອາໄສທາງພາກເໜືອ ແລະຕາເວັນອອກສ່ຽງເໜືອຂອງເມືອງມິນນີແອໂພລິສ. ເປົ້າໝາຍຂອງການປະເມີນຜົນກະທົບດ້ານສຸຂະພາບນີ້ແມ່ນເພື່ອສືບສວນເບິ່ງຜົນກະທົບດ້ານສຸຂະພາບທີ່ເປັນໄປໄດ້ທີ່ສາມາດເກີດຈາກທາງເລືອກການຕັດສິນໃຈນໍາໃຊ້ທີ່ດິນທີ່ສໍາຄັນທີ່ກໍານົດໄວ້ໃນແຜນການນັ້ນ. ບົດລາຍງານມີຈຸດປະສົງເຕືອນບອກຜູ້ເຮັດການຕັດສິນໃຈທີ່ສໍາຄັນໃຫ້ພິຈາລະນາເຖິງຜົນຕາມມາດ້ານສຸຂະພາບທີ່ເປັນໄປໄດ້ຈາກການຈັດຕັ້ງປະຕິບັດແຜນການຕໍ່ກັບສຸຂະພາບ ແລະຄວາມເປັນຢູ່ຂອງຜູ້ຢູ່ອາໄສ.

above the falls



City of Minneapolis
*Health Department*

ພະແນກສາທາລະນະສຸກເມືອງມິນນີແອໂພລິສ. ສັງລວມໂດຍຫຍໍ້ກ່ຽວກັບການປະເມີນຜົນກະທົບດ້ານສຸຂະພາບຂອງແຜນ Above the Falls: ຮັບປະກັນຄວາມເທົ່າທຽມດ້ານສຸຂະພາບໃນການຕັດສິນໃຈ. ເມືອງມິນນີແອໂພລິສ, ລັດມິນນີໂຊຕ້າ. ພຶດສະພາ 2013.


## ການສະໜັບສະໜູນໂຄງການ

ໂຄງການນີ້ໄດ້ຮັບການສະໜັບສະໜູນຈາກເງິນຊ່ວຍເຫຼືອລ້າຈາກໂຄງການຜົນກະທົບດ້ານສຸຂະພາບ (Health Impact Project), ເຊິ່ງເປັນການຮ່ວມມືກັນລະຫວ່າງມູນນິທິ Robert Wood Johnson Foundation ກັບ The Pew Charitable Trusts, ໂດຍໄດ້ຮັບການໃຫ້ທຶນຈາກມູນນິທິ Blue Cross and Blue Shield of Minnesota Foundation. ຄຳຄິດເຫັນທີ່ສະແດງໃນທີ່ນີ້ແມ່ນຄຳຄິດເຫັນຂອງບັນດາຜູ້ຂຽນ ແລະບໍ່ແມ່ນທັດສະຄິດເຫັນຂອງໂຄງການຜົນກະທົບດ້ານສຸຂະພາບ, ມູນນິທິ Robert Wood Johnson Foundation, The Pew Charitable Trusts, ຫຼື ມູນນິທິ Blue Cross and Blue Shield of Minnesota Foundation.

## ການຮັບຮູ້ກ່ຽວກັບຮູບພາບ

ຮູບພາບແມ່ນມາລະຍາດຂອງ Mill City Times ແລະ Pat Carney Studio.


## ບົດລາຍງານສະບັບເຕັມ

ເພື່ອເບິ່ງບົດລາຍງານການປະເມີນຜົນກະທົບດ້ານສຸຂະພາບສະບັບເຕັມ ແລະເຂົ້າເຖິງຂໍ້ມູນລາຍລະອຽດກ່ຽວກັບແຜນ Above the Falls, ກະລຸນາ ເຂົ້າເບິ່ງ www.minneapolismn.gov/cped/projects/cped_above_the_falls.


ສຳລັບການສອບຖາມທົ່ວໄປ ຫຼື ຖ້າທ່ານຕ້ອງການເອກະສານນີ້ໃນຮູບແບບທາງເລືອກໃດໜຶ່ງ, ກະລຸນາ ໂທຫາພະແນກສາທາລະນະສຸກເມືອງມິນນີແອໂພລິສ ທີ່ເບີ 612 673.2301 ຫຼື ອີເມວຫາ health@minneapolismn.gov. ຜູ້ຫູໜວກ ແລະຫູຕຶງອາດຈະນຳໃຊ້ relay service ເພື່ອໂທຫາຕົວແທນ 311 ທີ່ເບີ 612 673.3000. ຜູ້ໃຊ້ TTY ອາດຈະໂທຫາ 612 673.2157 ຫຼື 612 673.2626.

**ເອົາໃຈໃສ່:** ຖ້າທ່ານມີຄຳຖາມໃດໆກ່ຽວກັບເອກະສານນີ້ ກະລຸນາ ຕິດຕໍ່ຫາພະແນກສາທາລະນະສຸກເມືອງມິນນີແອໂພລິສ ທີ່ເບີ 612 673.2301.
**Hmong** - Ceeb toom. Yog koj xav tau kev pab txhais cov xov no rau koj dawb, hu 612 673.2800;
**Spanish** - Atención. Si desea recibir asistencia gratuita para traducir esta información, llame al 612 673.2700;
**Somali** - Ogow. Haddii aad dooneyso in lagaa kaalmeeyo tarjamadda macluumaadkani oo lacag la' aan wac 612 673.3500.